ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ

ເລກທີ...484...../ຫວກ

ນະຄອນຫຼວງວຽງຈັນ,ວັນທີ..27/.03./2015

# ແຈ້ງການ

**ເຖິງ:** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາທະນະຄານ, ນະຄອນຫຼວງ, ບັນດາແຂວງ, ອົງການຈັດຕັ້ງຂອງລັດ ແລະ ສັງຄົມ, ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ.

**ເລື່ອງ:** ອອກບັດປະຈໍາຕົວແບບໃໝ່ຢ່າງເປັນທາງການຢູ່ນະຄອນຫຼວງວຽງຈັນ.

- ອີງຕາມ ແຈ້ງການຂອງຄະນະເລຂາທິການລັດຖະບານ ສະບັບເລກທີ 627/ຄລບ, ລົງວັນທີ 11 ເມສາ 2009 ກ່ຽວກັບການເຫັນດີອະນຸມັດໂຄງການຄຸ້ມຄອງພົນລະເມືອງດ້ວຍລະບົບທັນສະໄໝ.

- ອີງຕາມ ໂຄງການຄຸ້ມຄອງພົນລະເມືອງດ້ວຍລະບົບທັນສະໄໝ ເລກທີ 409/ປກສ, ວັນທີ 04 ພຶດສະພາ 2009 ຂອງລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ

**ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບອອກແຈ້ງການດັ່ງນີ້:**

## I. ລັກສະນະຂອງບັດປະຈໍາຕົວແບບໃໝ່

1. ບັດປະຈໍາຕົວທີ່ຈະນໍາໃຊ້ເປັນວັດຖຸດິບເຮັດດ້ວຍຢາງປລາສຕິກ (PETG) ທີ່ປອດສານພິດ , ໄດ້ນໍາໃຊ້ເຕັກນິກຫຼາຍປະເພດເພື່ອປ້ອງກັນການປອມແປງ, ຂະໜາດຂອງບັດ (ລວງຍາວ 85 ,47 MM, ລວງກວ້າງ 53,92 MM, ຄວາມໜາ 0,80 MM ), ສາມາດທົນທານໃນສະພາບແວດລ້ອມແຕ່-20℃ ຫາ 60℃.

2. ສີຂອງບັດ: ບັດປະຈໍາຕົວພົນລະເມືອງລາວແມ່ນສີຂຽວ, ບັດປະຈໍາຕົວຕ່າງດ້າວ ແມ່ນສີເຫຼືອງ.

3. ເນື້ອໃນດ້ານໜ້າ ແລະ ດ້ານຫຼັງຂອງບັດ:

- ດ້ານເທິງສຸດມີຕົວໜັງສື ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບ ວັດທະນະຖາວອນ (ເປັນຕົວໜັງສືສີດໍາ).

- ດ້ານຊ້າຍມີມີກາໝາຍຊາດ, ມີຮູບພາບຂອງຜູ້ຖືບັດ, ມີເລກປະຈໍາຕົວບຸກຄົນຢູ່ກ້ອງຮູບ

- ຢູ່ເຄິ່ງກາງຂອງບັດ: ມີຕົວໜັງສືສີແດງຂຽນວ່າ ບັດປະຈຳຕົວ, ເລກທີບັດ, ລຸ່ມລົງມາມີຕົວໜັງສືສີດຳບອກຂໍ້ມູນສ່ວນຕົວຂອງຜູ້ທີ່ຖືບັດ.

- ດ້ານຂວາຂອງບັດ: ຕາປະທັບ, ລາຍເຊັນພ້ອມດ້ວຍ ຊື່ນາມແລະສະກຸນ ຂອງເຈົ້າໜ້າທີ່ອະນຸຍາດອອກບັດປະຈຳຕົວ

- ຊັ້ນພື້ນດ້ານໜ້າຂອງບັດ: ມີຮູບດອກຈຳປາ 7 ດອກ , ແລະ ຮູບພະທາດຫຼວງ 1 ຮູບ, ໃນນັ້ນມີ ເສັ້ນລາຍກ້ຽວວຽນສີຮຸ້ງ, ມີຕົວອັກສອນ ປກສ ທີ່ບໍ່ສາມາດເບິ່ງດ້ວຍຕາເປົ່າ.

- ຊັ້ນນອກສຸດ: ມີແຜ່ນຢາງປົກຫຸ້ມມີເສັ້ນລາຍນ້ຳກ້ຽວວຽນ, ມີຮູບແຜນທີ່ປະເທດລາວ 6 ຮູບ.

- ຢູ່ຊັ້ນດ້ານໃນ: ແມ່ນຝັງຊິມ ເກັບບັນທຶກຂໍ້ມູນສາມາດກວດກາ ດ້ວຍອຸປະກອນເຕັກນິກ.

- ພາບດ້ານຫຼັງຂອງບັດ: ມີຄຳແນະນຳການນຳໃຊ້ 3 ແຖວ ເປັນຕົວໜັງສືສີດຳ.

## II. ການອອກບັດປະຈຳຕົວແບບໃໝ່

1. ການອອກບັດປະຈຳຕົວແບບໃໝ່ແມ່ນເລີ່ມແຕ່ 30/03/ 2015 ,ປະຊາຊົນຜູ້ທີ່ຈະເຮັດບັດປະຈຳຕົວແບບໃໝ່ໃຫ້ໄປປະກອບເອກະສານນຳເຈົ້າໜ້າທີ່ຢູ່ ປກສ ເມືອງຂອງຕົນທີ່ຂຶ້ນກັບ, ສ່ວນບັດທີ່ໝົດອາຍຸການນຳໃຊ້ໃຫ້ເຮັດບັດແບບໃໝ່ເລີຍ, ບັດເກົ່າບໍ່ທັນໝົດອາຍຸແມ່ນຍັງມີຜົນນຳໃຊ້ຕາມລະບຽບກົດໝາຍຈົນກ່ວາກຳນົດຈິ່ງມາປ່ຽນເຮັດບັດໃໝ່.

2. ການດຳເນີນງານອອກບັດປະຈຳຕົວແບບໃໝ່ແມ່ນ ປກສ ເມືອງເປັນຜູ້ປ້ອນຂໍ້ມູນ, ສົ່ງຂໍ້ມູນເຂົ້າຖານຂໍ້ມູນຢູ່ສູນກາງ ໂດຍຜ່ານລະບົບສັນຍານຂອງລະບົບໂທລະຄົມ, ສູນກາງບ່ອນດຽວເປັນຜູ້ພິມບັດປະຈຳຕົວ, ແລ້ວສູນກາງເປັນຜູ້ຈັດສົ່ງໃຫ້ ປກສ ນະຄອນຫຼວງ, ປກສ ແຂວງ, ແລະ ປກສ ເມືອງເປັນຜູ້ແຈກຢາຍໃຫ້ປະຊາຊົນ ທີ່ຕົນດຳລົງຊີວິດຢູ່ພາຍໃນເມືອງຕົນຮັບຜິດຊອບ (ສ່ວນ ປກສນະຄອນຫຼວງ ແລະ ປກສ ແຂວງ ມີໜ້າທີ່ກວດກາຄວາມຖືກຕ້ອງຂອງຂໍ້ມູນ).

3. ຄ່າບັດປະຈຳຕົວ ແລະ ຄ່າທຳນຽມ ແມ່ນອີງຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ສະບັບລົງວັນທີ 26/12/2012 ໃນນັ້ນ, ປະຊາຊົນ ຈະຕ້ອງໄດ້ຈ່າຍບັດລະ 50.000 ກີບ (ລວມທັງຄ່າບັດ, ຄ່າທຳນຽມ ແລະ ຄ່າຂົນສົ່ງແຕ່ສູນກາງໄປຫາ ແຂວງ, ນະຄອນຫຼວງ ແລະ ເມືອງ ທີ່ຜູ້ຖືບັດປະຈຳຢູ່).

4. ການນຳໃຊ້ເລກລະຫັດຢູ່ໃນບັດປະຈຳຕົວແບບໃໝ່: ແມ່ນໃຫ້ນຳໃຊ້ເລກລະຫັດທີ່ຢູ່ກ້ອງຮູບ ໃນການອ້າງອີງເວລາປະກອບເອກະສານຕ່າງໆ.

ດັ່ງນັ້ນ, ຈຶ່ງໄດ້ອອກແຈ້ງການມາຍັງບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາທະນະຄານ, ອົງການຈັດຕັ້ງຂອງລັດ ແລະ ສັງຄົມ, ພະນັກງານ ແລະ ປະຊາຊົນໃນຂອບເຂດທົ່ວປະເທດເພື່ອຮັບຮູ້ຈັດຕັ້ງປະຕິບັດຢ່າງທົ່ວເຖິງ.

ຣ ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ

ພາສີ ພົມມະສອນ

ຈັນທອງ ທິງຄຳ